ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 314 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 18 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການຖ່າຍທອດເຕັກໂນໂລຊີ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 065/ສພຊ, ລົງວັນທີ 08 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍການຖ່າຍທອດເຕັກໂນໂລຊີ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 029/ຄປຈ, ລົງວັນທີ 05 ທັນວາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍການຖ່າຍທອດເຕັກໂນໂລຊີ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 065 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08/11/17

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ ໃນວາລະກອງປະຊຸມ ຄັ້ງວັນທີ 8 ພະຈິກ 2017.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ　　　　　　　　　　　　　　　　　　ເລກທີ 33 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 8 ພະຈິກ 2017

# ກົດໝາຍ
# ວ່າດ້ວຍການຖ່າຍທອດເຕັກໂນໂລຊີ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການຖ່າຍທອດເຕັກໂນໂລຊີ ເພື່ອຊຸກຍູ້ ສົ່ງເສີມ ການຄົ້ນຄວ້າ, ການພັດທະນາ, ການປະດິດສ້າງ, ການຄ້າ, ການລົງທຶນ, ການຜະລິດ, ການບໍລິການ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແນໃສ່ເຮັດໃຫ້ສັງຄົມໄດ້ນຳໃຊ້ເຕັກໂນໂລຊີທີ່ເໝາະສົມ, ກ້າວໜ້າ, ທັນສະໄໝ, ມີປະສິດທິພາບ ແລະ ປະສິດທິຜົນ ເປັນມິດຕໍ່ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາປະເທດຊາດ ແລະ ສັງຄົມມີຄວາມຍຸຕິທຳ.

**ມາດຕາ 2 ການຖ່າຍທອດເຕັກໂນໂລຊີ**

ການຖ່າຍທອດເຕັກໂນໂລຊີ ແມ່ນ ການຖ່າຍທອດສິດຂອງການເປັນເຈົ້າຂອງ ຫຼື ສິດນຳໃຊ້ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ກ່ຽວກັບເຕັກໂນໂລຊີ ເປັນຕົ້ນ ເຄັດລັບ, ປະສົບການ, ຂະບວນການ, ກຳມະວິທີ ຫຼື ວິທີການ, ເຄື່ອງມື, ອຸປະກອນ, ເຄື່ອງຈັກ, ພາຫະນະ ຈາກຜູ້ມີສິດຖ່າຍທອດ ໄປຫາຜູ້ຮັບການຖ່າຍທອດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຕັກໂນໂລຊີ** ໝາຍເຖິງ ຂະບວນການຫັນປ່ຽນຊັບພະຍາກອນ ໃຫ້ກາຍເປັນຜະລິດຕະພັນ ເພື່ອຮັບໃຊ້ສັງຄົມ ດ້ວຍການນຳໃຊ້ລະບົບເຄື່ອງມື, ພະລັງງານ, ພາຫະນະ, ວິທີການ ແລະ ກຳມະວິທີການຜະລິດສະເພາະ;
2. **ເຈົ້າຂອງເຕັກໂນໂລຊີ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ປະດິດສ້າງເຕັກໂນໂລຊີນັ້ນໂດຍກົງ ຫຼື ໄດ້ຮັບການມອບສິດທີ່ຖືກຕ້ອງຕາມກົດໝາຍ ຈາກຜູ້ປະດິດສ້າງ;
3. **ເຕັກໂນໂລຊີໃໝ່** ໝາຍເຖິງ ເຕັກໂນໂລຊີ ທີ່ໄດ້ມີການປະດິດສ້າງຂຶ້ນເປັນຄັ້ງທຳອິດຢູ່ໃນ ສປປ ລາວ ແລະ ໃນໂລກ;

4. **ເຕັກໂນໂລຊີກ້າວໜ້າ** ໝາຍເຖິງ ເຕັກໂນໂລຊີ ທີ່ຢູ່ແຖວໜ້າ ແລະ ມີມາດຕະຖານເຕັກໂນໂລຊີສູງກວ່າມາດຕະຖານເຕັກໂນໂລຊີປະເພດດຽວກັນ ທີ່ມີຢູ່ໃນປັດຈຸບັນ;

5. **ເຕັກໂນໂລຊີສະອາດ** ໝາຍເຖິງ ເຕັກໂນໂລຊີ ທີ່ມີປະສິດທິພາບສູງ ແລະ ມີມົນລະພິດໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມ, ທໍາມະຊາດ ແລະ ສັງຄົມ;

6. **ເຕັກໂນໂລຊີລະດັບສູງ** ໝາຍເຖິງ ເຕັກໂນໂລຊີທີ່ມີປະສິດທິພາບສູງ ຈາກການຄົ້ນຄວ້າວິທະຍາສາດ ແລະ ການພັດທະນາເຕັກໂນໂລຊີ ໄດ້ມີການປະດິດສ້າງຜະລິດຕະພັນ, ການບໍລິການທີ່ມີປະສິດທິພາບ, ປະສິດທິຜົນ, ມີມູນຄ່າເພີ່ມສູງ, ມີບົດບາດສໍາຄັນຕໍ່ຂະແໜງການຜະລິດ, ການບໍລິການໃໝ່ ແລະ ການຫັນເປັນທັນສະໄໝ;

7. **ສິດຕໍ່ຊັບສິນທາງປັນຍາ** ໝາຍເຖິງ ສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຊັບສິນທາງປັນຍາ;

8. **ສູນບົ່ມເພາະເຕັກໂນໂລຊີ** ໝາຍເຖິງ ສະຖານທີ່ສະໜອງ ທາງດ້ານເຕັກນິກ ແລະ ການບໍລິການທີ່ຈໍາເປັນ ເພື່ອສະໜັບສະໜູນໃຫ້ຜູ້ຜະລິດ ແລະ ຜູ້ປະກອບການທຸລະກິດ ສາມາດນໍາເອົາຄວາມຮູ້, ປະສົບການ, ເຕັກໂນໂລຊີ ຫຼື ຜົນຂອງການຄົ້ນຄວ້າ, ເຂົ້າຫາແຫຼ່ງທຶນ ແລະ ການຕະຫຼາດ ເພື່ອນໍາໄປພັດທະນາເປັນທຸລະກິດໃໝ່ ແລະ ຜະລິດຕະພັນນະວັດຕະກໍາ;

9. **ຕະຫຼາດເຕັກໂນໂລຊີ** ໝາຍເຖິງ ສະຖານທີ່ວາງສະແດງ, ນໍາສະເໜີ, ຊື້, ຂາຍເຕັກໂນໂລຊີ, ສົ່ງເສີມການຖ່າຍທອດເຕັກໂນໂລຊີ ແລະ ສະໜອງການບໍລິການອື່ນໆ ກ່ຽວກັບການຖ່າຍທອດເຕັກໂນໂລຊີ;

10. **ການປະເມີນເຕັກໂນໂລຊີ** ໝາຍເຖິງ ການຕີລາຄາ, ຄາດຄະເນຜົນກະທົບຂອງຜະລິດຕະພັນ ແລະ ຂະບວນການໃໝ່ ເຊັ່ນ ວັດຖຸປະກອນ, ເຄື່ອງຈັກ ແລະ ຜະລິດຕະພັນ, ຂະບວນການ ຫຼື ລະບົບທີ່ດໍາເນີນ ຫຼື ນໍາໃຊ້ຂອງວິສາຫະກິດໃດໜຶ່ງຕໍ່ສັງຄົມ ແລະ ສິ່ງແວດລ້ອມ;

11. **ການກວດສອບເຕັກໂນໂລຊີ** ໝາຍເຖິງ ການດໍາເນີນການກວດກາ, ການກໍານົດຕົວຊີ້ວັດຂອງເຕັກໂນໂລຊີ ທີ່ໄດ້ມີການຖ່າຍທອດ ໂດຍສົມທຽບກັບຕົວຊີ້ວັດເຕັກໂນໂລຊີທີ່ໄດ້ກໍານົດໄວ້ໃນສັນຍາຖ່າຍທອດເຕັກໂນໂລຊີ;

12. **ການຕີລາຄາເຕັກໂນໂລຊີ** ໝາຍເຖິງ ການກໍານົດລະດັບເຕັກໂນໂລຊີ, ມູນຄ່າ, ຜົນປະໂຫຍດທາງເສດຖະກິດຂອງເຕັກໂນໂລຊີ ຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

13. **ການປ່ຽນແປງໃໝ່ເຕັກໂນໂລຊີ** ໝາຍເຖິງ ການປ່ຽນແປງທັງໝົດ ຫຼື ບາງສ່ວນ ຂອງເຕັກໂນໂລຊີ ທີ່ນໍາໃຊ້ໃນປັດຈຸບັນ ໄປເປັນເຕັກໂນໂລຊີໃດໜຶ່ງ ທີ່ມີລັກສະນະກ້າວໜ້າ, ທັນສະໄໝ ແລະ ມີຜົນຜະລິດສູງກວ່າເກົ່າ;

14. **ຜູ້ປະກອບກິດຈະການໃໝ່** (ສະຕາດອັບ-Start-up) ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ມີການເຄື່ອນໄຫວ, ສ້າງຕັ້ງ ແລະ ພັດທະນາທຸລະກິດ ທີ່ໄດ້ຈາກຜົນຂອງການຄົ້ນຄວ້າວິທະຍາສາດ ແລະ ການພັດທະນາເຕັກໂນໂລຊີ, ການຜະລິດ ແລະ ການບໍລິການ;

15. **ເຄັດລັບ** ( ໂນຮາວ-Know-how ) ໝາຍເຖິງ ຄວາມຮູ້ຂອງຜູ້ເປັນເຈົ້າຂອງເຕັກໂນໂລຊີ ທີ່ໄດ້ມາຈາກການຄົ້ນຄວ້າ, ຂະບວນການການຜະລິດ ແລະ ການດໍາເນີນທຸລະກິດ ທີ່ເປັນປັດໄຈຕັດສິນທາງດ້ານຄຸນນະພາບ, ຄວາມສາມາດໃນການແຂ່ງຂັນ;

16. **ຜູ້ດໍາເນີນການຖ່າຍທອດເຕັກໂນໂລຊີ** ໝາຍເຖິງ ເຈົ້າຂອງ, ຜູ້ຖ່າຍທອດ, ຜູ້ຮັບການຖ່າຍທອດ ແລະ ຜູ້ໃຫ້ບໍລິການ ເຕັກໂນໂລຊີ;

17. ນະວັດຕະກໍາ ໝາຍເຖິງ ການນໍາໃຊ້ຄວາມຮູ້, ຄວາມສາມາດ, ກໍາມະວິທີການຜະລິດ ແລະ ປະສົບການດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຄົ້ນຄວ້າ, ປະດິດສ້າງ, ບໍລິການ, ການພັດທະນາຜະລິດຕະພັນ, ສິນຄ້າທີ່ມີຄຸນນະພາບສູງ ໃນຮູບແບບໃໝ່ອອກສູ່ສັງຄົມ;

18. ສິດທິບັດ ໝາຍເຖິງ ເອກະສານຢັ້ງຢືນທີ່ເປັນທາງການຈາກການຈັດຕັ້ງລັດ ເພື່ອປົກປ້ອງການປະດິດສ້າງທີ່ໃໝ່, ມີຂັ້ນຕອນການປະດິດສ້າງ ແລະ ສາມາດນໍາໃຊ້ເຂົ້າສູ່ການຜະລິດອຸດສາຫະກໍາໄດ້;

19. ອະນຸສິດທິບັດ ໝາຍເຖິງ ເອກະສານຢັ້ງຢືນ ທີ່ເປັນທາງການຈາກການຈັດຕັ້ງລັດ ເພື່ອປົກປ້ອງສິ່ງປະດິດ;

20. ພັນທຸກໍາ ໝາຍເຖິງ ຄຸນລັກສະນະພື້ນຖານຂອງສິ່ງທີ່ມີຊີວິດ ທີ່ເປັນລະຫັດໃນການສືບທອດ ຫຼື ການສົ່ງຕໍ່ຈາກລຸ້ນໜຶ່ງ ໄປສູ່ອີກລຸ້ນໜຶ່ງ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຖ່າຍທອດເຕັກໂນໂລຊີ

ລັດ ໃຫ້ຄວາມສໍາຄັນຕໍ່ ການຖ່າຍທອດເຕັກໂນໂລຊີ ດ້ວຍການອໍານວຍຄວາມສະດວກ ໃຫ້ແກ່ການຄົ້ນຄວ້າ ແລະ ພັດທະນາ, ການປະດິດສ້າງ, ການນໍາໃຊ້ພູມປັນຍາທ້ອງຖິ່ນ, ການຜະລິດ, ການບໍລິການ ການຖ່າຍທອດເຕັກໂນໂລຊີ ແລະ ການນໍາໃຊ້ນະວັດຕະກໍາ ເພື່ອຮັບປະກັນສິດຜົນປະໂຫຍດ, ຄວາມປອດໄພຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ, ການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ຄວາມໝັ້ນຄົງ ແລະ ຄວາມສະຫງົບປອດໄພຂອງຊາດ.

ລັດ ຊຸກຍູ້, ສົ່ງເສີມການເຄື່ອນໄຫວ ແລະ ການລົງທຶນເຂົ້າໃນການຖ່າຍທອດເຕັກໂນໂລຊີ ດ້ວຍການສ້າງໂຄງລ່າງພື້ນຖານ, ພັດທະນາ ແລະ ປະກອບບຸກຄະລາກອນ, ສະໜອງງົບປະມານ, ວັດຖຸປະກອນ, ການເຂົ້າເຖິງແຫຼ່ງທຶນພັດທະນາ ແລະ ສະໜອງຂໍ້ມູນ ຂ່າວສານ ດ້ານວິທະຍາສາດ ແລະ ເຕັກໂນໂລຊີ.

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນພັດທະນາ ເຕັກໂນໂລຊີທີ່ກ້າວໜ້າ, ທັນສະໄໝ, ເໝາະສົມ ແລະ ເປັນມິດຕໍ່ສິ່ງແວດລ້ອມ ດ້ວຍການປະຕິບັດນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນ ຕາມກົດໝາຍ.

### ມາດຕາ 5 ຫຼັກການກ່ຽວກັບການຖ່າຍທອດເຕັກໂນໂລຊີ

ການຖ່າຍທອດເຕັກໂນໂລຊີ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
2. ນໍາໃຊ້ຊັບພະຍາກອນ ຢ່າງມີປະສິດທິພາບ, ປະສິດທິຜົນ, ປະຢັດ ແລະ ເປັນມິດກັບສິ່ງແວດລ້ອມ ຕອບສະໜອງການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ;
3. ຮັບປະກັນຄວາມປອດໄພຕໍ່ ຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນ, ສິ່ງແວດລ້ອມ ແລະ ສັງຄົມ;
4. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ສັງຄົມ ໃນການຄົ້ນຄວ້າ, ພັດທະນາ, ຄຸ້ມຄອງ ແລະ ນໍາໃຊ້ເຕັກໂນໂລຊີ;
5. ຮັບປະກັນຄວາມສະເໝີພາບຕໍ່ໜ້າກົດໝາຍ ຂອງຜູ້ດໍາເນີນການຖ່າຍທອດເຕັກໂນໂລຊີ;
6. ຮັບປະກັນຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ;
7. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຖ່າຍທອດເຕັກໂນໂລຊີ ຢູ່ ສປປ ລາວ.

ກົດໝາຍສະບັບນີ້ ບໍ່ກວມເອົາການແລກປ່ຽນບົດຮຽນໃນການຜະລິດລະຫວ່າງປະຊາຊົນດ້ວຍກັນ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ເປີດກວ້າງການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຖ່າຍທອດເຕັກໂນໂລຊີດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຊີ, ຕະຫຼາດເຕັກໂນໂລຊີ, ການສ້າງ ແລະ ຍົກລະດັບທາງດ້ານວິຊາການໃຫ້ບຸກຄະລາກອນ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ເຕັກໂນໂລຊີທີ່ ສົ່ງເສີມ, ຄວບຄຸມ ແລະ ຫ້າມ ຖ່າຍທອດ

**ມາດຕາ 8 ເຕັກໂນໂລຊີທີ່ສົ່ງເສີມໃຫ້ມີການຖ່າຍທອດ**

ເຕັກໂນໂລຊີທີ່ສົ່ງເສີມໃຫ້ມີການຖ່າຍທອດ ແມ່ນ ເຕັກໂນໂລຊີສະອາດ, ເຕັກໂນໂລຊີລະດັບສູງ, ເຕັກໂນໂລຊີ ທີ່ເໝາະສົມ, ກ້າວໜ້າ ແລະ ທັນສະໄໝ.

ເຕັກໂນໂລຊີທີ່ສົ່ງເສີມໃຫ້ມີການຖ່າຍທອດ ຕ້ອງສອດຄ່ອງ ແລະ ຕອບສະໜອງໄດ້ຕາມເງື່ອນໄຂ ດັ່ງນີ້:

1. ສ້າງຜະລິດຕະພັນໃໝ່ທີ່ມີລັກສະນະການແຂ່ງຂັນສູງ;
2. ສ້າງຂະແໜງ ອຸດສາຫະກຳ, ກະສິກຳ ແລະ ບໍລິການໃໝ່;
3. ປະຢັດພະລັງງານ, ວັດຖຸດິບ, ແຮງງານ ແລະ ຕົ້ນທຶນການຜະລິດ;
4. ນຳໃຊ້ພະລັງງານໃໝ່ ແລະ ພະລັງງານທົດແທນ;
5. ປົກປ້ອງສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງທີ່ມີຊີວິດອື່ນ;
6. ປ້ອງກັນ, ຕ້ານໄພພິບັດທຳມະຊາດ ແລະ ການແຜ່ລະບາດຂອງເຊື້ອພະຍາດ;
7. ການຜະລິດສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
8. ປົກປ້ອງ ແລະ ພັດທະນາແຫຼ່ງ ພັນທຸກຳ, ພັນພື້ນເມືອງ, ພັນປະສົມ, ພັນປັບປຸງ ຂອງແນວພັນພືດ ແລະ ແນວພັນສັດ ເພື່ອຍົກສູງຄຸນຄ່າທາງດ້ານເສດຖະກິດ;
9. ປູກຝັງ, ລ້ຽງສັດ, ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້ ແລະ ການປະມົງ;
10. ພັດທະນາຂະແໜງການ, ອາຊີບທີ່ເປັນມູນເຊື້ອ ແລະ ພູມປັນຍາທ້ອງຖິ່ນ;
11. ນຳໃຊ້ເຕັກໂນໂລຊີໃໝ່ມາປັບປຸງຄຸນນະພາບຜະລິດຕະພັນ ແລະ ຍົກສູງສະມັດຖະພາບການຜະລິດ.

ລາຍລະອຽດບັນຊີເຕັກໂນໂລຊີທີ່ສົ່ງເສີມໃຫ້ຖ່າຍທອດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 9 ເຕັກໂນໂລຊີທີ່ຄວບຄຸມການຖ່າຍທອດ**

ເຕັກໂນໂລຊີທີ່ຄວບຄຸມການຖ່າຍທອດ ແມ່ນ ເຕັກໂນໂລຊີທີ່ອາດກໍ່ໃຫ້ເກີດຜົນກະທົບທາງລົບ ຫຼື ກໍ່ຄວາມເສຍຫາຍໃຫ້ແກ່:

1. ເສດຖະກິດ-ສັງຄົມ ແລະ ຜົນປະໂຫຍດຂອງຊາດ;
2. ສຸຂະພາບ ແລະ ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງທີ່ມີຊີວິດອື່ນ;
3. ວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ;
4. ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ນອກຈາກນັ້ນ ການກຳນົດເຕັກໂນໂລຊີຄວບຄຸມການຖ່າຍທອດ ຕ້ອງສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ລາຍລະອຽດບັນຊີເຕັກໂນໂລຊີທີ່ຄວບຄຸມການຖ່າຍທອດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 ເຕັກໂນໂລຊີທີ່ຫ້າມຖ່າຍທອດ**

ເຕັກໂນໂລຊີທີ່ຫ້າມຖ່າຍທອດ ມີ ດັ່ງນີ້:

1. ເຕັກໂນໂລຊີທີ່ຫຼ້າສະໄໝ ໃຫ້ຜົນຜະລິດຕ່ຳ ຊຶ່ງບໍ່ສາມາດຕອບສະໜອງຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ;
2. ເຕັກໂນໂລຊີທີ່ມີຜົນກະທົບ ແລະ ສ້າງຄວາມເສຍຫາຍຮ້າຍແຮງ ຕໍ່ຄວາມປອດໄພທາງດ້ານແຮງງານ, ສຸຂານາໄມຂອງຄົນ, ສັດ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮີດຄອງປະເພນີ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
3. ເຕັກໂນໂລຊີທີ່ກຳນົດໄວ້ໃນບັນຊີລັບຂອງຊາດ;
4. ເຕັກໂນໂລຊີທີ່ຫ້າມຖ່າຍທອດ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ລາຍລະອຽດບັນຊີເຕັກໂນໂລຊີທີ່ຫ້າມຖ່າຍທອດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ເປົ້າໝາຍ, ຮູບການ ແລະ ວິທີການຖ່າຍທອດເຕັກໂນໂລຊີ

**ມາດຕາ 11 ເປົ້າໝາຍການຖ່າຍທອດເຕັກໂນໂລຊີ**

ເປົ້າໝາຍການຖ່າຍທອດເຕັກໂນໂລຊີ ແມ່ນ ທັງໝົດ ຫຼື ບາງສ່ວນ ຂອງເຕັກໂນໂລຊີທີ່ນຳມາຖ່າຍທອດ ຊຶ່ງມີ ດັ່ງນີ້:

1. ເຄັດລັບ;
2. ຄວາມຮູ້ດ້ານເຕັກນິກກ່ຽວກັບເຕັກໂນໂລຊີ ທີ່ໄດ້ມີການຖ່າຍທອດ ໃນຮູບແບບ, ວິທີການ, ຂະບວນການເຕັກໂນໂລຊີ, ວິທີການແກ້ໄຂດ້ານເຕັກນິກ, ສູດຄິດໄລ່, ຕົວເລກດ້ານເຕັກນິກ, ແຜນຜັງ, ແຜນອາດດ້ານເຕັກນິກ, ຖານຂໍ້ມູນ ຂ່າວສານ ແລະ ໂປຣແກຣມທາງຄອມພິວເຕີ;
3. ການປັບປຸງວິທີການຜະລິດໃໝ່ທີ່ເໝາະສົມ, ການປ່ຽນແປງເຕັກໂນໂລຊີໃໝ່.

ເປົ້າໝາຍຂອງການຖ່າຍທອດເຕັກໂນໂລຊີ ອາດຕິດພັນ ຫຼື ບໍ່ຕິດພັນ ກັບສິດທາງດ້ານຊັບສິນທາງປັນຍາ.

**ມາດຕາ 12 ຮູບການຖ່າຍທອດເຕັກໂນໂລຊີ**

ຮູບການຖ່າຍທອດເຕັກໂນໂລຊີ ມີ ດັ່ງນີ້:

1. ການເຮັດສັນຍາຖ່າຍທອດເຕັກໂນໂລຊີສະເພາະ;
2. ການເປັນສ່ວນໜຶ່ງຂອງສັນຍາ ຖ່າຍທອດເຕັກໂນໂລຊີ ຫຼື ໂຄງການ ດັ່ງນີ້:
   - ສັນຍາມອບສິດທາງການຄ້າ;
   - ສັນຍາມອບສິດທາງດ້ານຊັບສິນທາງປັນຍາ;
   - ສັນຍາການຊື້, ຂາຍ ເຄື່ອງຈັກ, ພາຫະນະ, ອຸປະກອນ ລວມທັງ ວິທີການ, ການຕິດຕັ້ງ ແລະ ກໍາມະວິທີການຜະລິດ ທີ່ຕິດພັນກັບການຖ່າຍທອດເຕັກໂນໂລຊີ;
   - ໂຄງການລົງທຶນ;
   - ໂຄງການຊ່ວຍເຫຼືອຂອງຕ່າງປະເທດ, ບຸກຄົນ ແລະ ອົງການຈັດຕັ້ງສາກົນ.
3. ຮູບການຖ່າຍທອດເຕັກໂນໂລຊີອື່ນ.

**ມາດຕາ 13 ວິທີການຖ່າຍທອດເຕັກໂນໂລຊີ**

ວິທີການຖ່າຍທອດເຕັກໂນໂລຊີ ມີ ດັ່ງນີ້:

1. ການສະໜອງຂໍ້ມູນ ຂ່າວສານກ່ຽວກັບເຕັກໂນໂລຊີ;
2. ການຝຶກອົບຮົມ ແກ່ຜູ້ຮັບການຖ່າຍທອດເຕັກໂນໂລຊີ;
3. ການສົ່ງຜູ້ຊ່ຽວຊານ ເພື່ອເປັນທີ່ປຶກສາ ໃຫ້ແກ່ຜູ້ຮັບການຖ່າຍທອດ;
4. ວິທີການອື່ນ ຕາມການຕົກລົງຂອງຄູ່ສັນຍາ.

## ພາກທີ IV
## ຂັ້ນຕອນດໍາເນີນ, ສັນຍາ ແລະ ການບໍລິການ ການຖ່າຍທອດເຕັກໂນໂລຊີ
### ໝວດທີ 1
### ຂັ້ນຕອນດໍາເນີນການຖ່າຍທອດເຕັກໂນໂລຊີ

**ມາດຕາ 14 ການດໍາເນີນການຖ່າຍທອດເຕັກໂນໂລຊີ**

ການດໍາເນີນການຖ່າຍທອດເຕັກໂນໂລຊີ ໃຫ້ປະຕິບັດ ດັ່ງນີ້:

1. ສໍາລັບເຕັກໂນໂລຊີທີ່ສົ່ງເສີມໃຫ້ມີການຖ່າຍທອດ ສາມາດດໍາເນີນການຖ່າຍທອດໄດ້ ແຕ່ໃຫ້ແຈ້ງຕໍ່ອົງການຄຸ້ມຄອງການຖ່າຍທອດເຕັກໂນໂລຊີ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຖ່າຍທອດເປັນຕົ້ນໄປ;
2. ສໍາລັບເຕັກໂນໂລຊີທີ່ຄວບຄຸມການຖ່າຍທອດ ຕ້ອງຂໍອະນຸຍາດຖ່າຍທອດເຕັກໂນໂລຊີ ນໍາອົງການຄຸ້ມຄອງການຖ່າຍທອດເຕັກໂນໂລຊີ.

ໃນກໍລະນີຈໍາເປັນ ລັດຖະບານ ອາດພິຈາລະນາໃຫ້ຖ່າຍທອດເຕັກໂນໂລຊີທີ່ຫ້າມຖ່າຍທອດ, ສໍາລັບເຕັກໂນໂລຊີທີ່ກໍານົດໄວ້ໃນມາດຕາ 10 ຂໍ້ 3 ນັ້ນ ຕ້ອງໄດ້ຂໍອະນຸຍາດນໍາຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 15 ການຂໍອະນຸຍາດຖ່າຍທອດເຕັກໂນໂລຊີທີ່ຄວບຄຸມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາເຂົ້າ, ສົ່ງອອກ, ຜະລິດ ແລະ ບໍລິການ, ຄົ້ນຄວ້າ ທີ່ມີການຖ່າຍທອດເຕັກໂນໂລຊີ ທີ່ໄດ້ກໍານົດໄວ້ໃນບັນຊີເຕັກໂນໂລຊີທີ່ຄວບຄຸມການຖ່າຍທອດ ຕ້ອງໄດ້ຍື່ນຄໍາຮ້ອງຂໍ

ອະນຸຍາດນຳອົງການຄຸ້ມຄອງການຖ່າຍທອດເຕັກໂນໂລຊີ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອພິຈາລະນາ ອອກໃບອະນຸຍາດໃຫ້ຖ່າຍທອດເຕັກໂນໂລຊີ.

**ມາດຕາ 16 ເອກະສານປະກອບ ການຂໍອະນຸຍາດຖ່າຍທອດເຕັກໂນໂລຊີທີ່ຄວບຄຸມ**

ເອກະສານປະກອບ ການຂໍອະນຸຍາດຖ່າຍທອດເຕັກໂນໂລຊີທີ່ຄວບຄຸມ ມີ ດັ່ງນີ້:

1. ຄຳຮ້ອງຕາມແບບພິມ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
2. ສັນຍາຖ່າຍທອດເຕັກໂນໂລຊີ;
3. ບັນຊີ ເອກະສານ ຫຼື ອຸປະກອນກ່ຽວກັບເຕັກໂນໂລຊີ;
4. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 17 ການພິຈາລະນາ ການຂໍອະນຸຍາດຖ່າຍທອດເຕັກໂນໂລຊີທີ່ຄວບຄຸມ**

ອົງການຄຸ້ມຄອງການຖ່າຍທອດເຕັກໂນໂລຊີ ພິຈາລະນາການຂໍອະນຸຍາດຖ່າຍທອດເຕັກໂນໂລຊີທີ່ຄວບຄຸມຕາມຂອບເຂດສິດຂອງຕົນ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ, ເວັ້ນເສຍແຕ່ບາງປະເພດເຕັກໂນໂລຊີທີ່ມີຄວາມຈຳເປັນຕ້ອງກວດສອບຜ່ານທາງດ້ານເຕັກນິກ ຫຼື ວິຊາການ ຊຶ່ງອາດໃຊ້ເວລາຫຼາຍກວ່ານັ້ນ ແຕ່ບໍ່ໃຫ້ເກີນ ສາມສິບວັນ ລັດຖະການ.

## ໝວດທີ 2
## ສັນຍາຖ່າຍທອດເຕັກໂນໂລຊີ

**ມາດຕາ 18 ສັນຍາຖ່າຍທອດເຕັກໂນໂລຊີ**

ສັນຍາຖ່າຍທອດເຕັກໂນໂລຊີ ແມ່ນ ການຕົກລົງລະຫວ່າງຄູ່ສັນຍາຖ່າຍທອດເຕັກໂນໂລຊີ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

ສັນຍາຖ່າຍທອດເຕັກໂນໂລຊີ ຕ້ອງເຮັດເປັນລາຍລັກອັກສອນ, ໃນກໍລະນີສັນຍາຖ່າຍທອດເຕັກໂນໂລຊີຫາກເຮັດເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ.

**ມາດຕາ 19 ເນື້ອໃນຂອງສັນຍາຖ່າຍທອດເຕັກໂນໂລຊີ**

ສັນຍາຖ່າຍທອດເຕັກໂນໂລຊີ ມີເນື້ອໃນ ດັ່ງນີ້:

1. ຊື່ຂອງສັນຍາຖ່າຍທອດເຕັກໂນໂລຊີ;
2. ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຄູ່ສັນຍາ;
3. ເປົ້າໝາຍຂອງການຖ່າຍທອດ ແລະ ຜະລິດຕະພັນທີ່ໄດ້ຮັບຈາກເຕັກໂນໂລຊີທີ່ໄດ້ຖ່າຍທອດ;
4. ການຖ່າຍທອດສິດການເປັນເຈົ້າຂອງ ຫຼື ການຖ່າຍທອດສິດນຳໃຊ້ເຕັກໂນໂລຊີ;
5. ແຜນການ, ວິທີການ ແລະ ສະຖານທີ່ຖ່າຍທອດເຕັກໂນໂລຊີ;
6. ມູນຄ່າ ແລະ ວິທີການຊຳລະ;
7. ວັນທີ, ເດືອນ, ປີ ທີ່ມີຜົນໃຊ້ບັງຄັບ ແລະ ອາຍຸຂອງສັນຍາ;
8. ສິດ ແລະ ພັນທະ ຂອງຄູ່ສັນຍາ;
9. ໄລຍະເວລາການຮັບປະກັນເຕັກໂນໂລຊີທີ່ໄດ້ຖ່າຍທອດ;
10. ຄວາມຮັບຜິດຊອບຕໍ່ການລະເມີດສັນຍາ;

11. ກົດໝາຍທີ່ນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງ;
12. ຮູບການ ແລະ ອົງການແກ້ໄຂຂໍ້ຂັດແຍ່ງ;
13. ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ;
14. ການປັບໃໝຕໍ່ການລະເມີດສັນຍາ;
15. ເນື້ອໃນອື່ນ ຕາມການຕົກລົງຂອງຄູ່ສັນຍາ.

**ມາດຕາ 20 ການມອບ-ໂອນສັນຍາການຖ່າຍທອດເຕັກໂນໂລຊີ**

ຄູ່ສັນຍາ ສາມາດມອບ-ໂອນ ສັນຍາການຖ່າຍທອດເຕັກໂນໂລຊີ ໃຫ້ບຸກຄົນທີສາມ ສືບຕໍ່ປະຕິບັດສັນຍາແທນຕົນໄດ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຄູ່ສັນຍາອີກຝ່າຍໜຶ່ງເສຍກ່ອນ ແລະ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງການຖ່າຍທອດເຕັກໂນໂລຊີ.

## ໝວດທີ 3
## ການບໍລິການການຖ່າຍທອດເຕັກໂນໂລຊີ

**ມາດຕາ 21 ການດຳເນີນທຸລະກິດການບໍລິການການຖ່າຍທອດເຕັກໂນໂລຊີ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ການບໍລິການການຖ່າຍທອດເຕັກໂນໂລຊີ ຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງຂໍສ້າງຕັ້ງວິສາຫະກິດ ນຳຫ້ອງການບໍລິ ການການລົງທຶນປະຕູດຽວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ທຸລະກິດການບໍລິການການຖ່າຍທອດເຕັກໂນໂລຊີ ມີ ດັ່ງນີ້:

1. ການເປັນຜູ້ຕາງໜ້າ ໃນການດຳເນີນການຖ່າຍທອດເຕັກໂນໂລຊີ;
2. ການເປັນທີ່ປຶກສາ;
3. ການຕິດຕັ້ງເຄື່ອງຈັກ ຫຼື ອຸປະກອນການຜະລິດ;
4. ການກວດສອບເຕັກໂນໂລຊີ;
5. ການຕີລາຄາເຕັກໂນໂລຊີ;
6. ການປະເມີນເຕັກໂນໂລຊີ;
7. ການສົ່ງເສີມການຖ່າຍທອດເຕັກໂນໂລຊີ;
8. ການບໍລິການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ເງື່ອນໄຂຂອງຜູ້ດຳເນີນທຸລະກິດບໍລິການການຖ່າຍທອດເຕັກໂນໂລຊີ**

ຜູ້ທີ່ຈະດຳເນີນທຸລະກິດບໍລິການການຖ່າຍທອດເຕັກໂນໂລຊີ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການທີ່ກ່ຽວຂ້ອງກັບເຕັກໂນໂລຊີ;
2. ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການກ່ຽວກັບເຕັກໂນໂລຊີຢ່າງໜ້ອຍ ສາມປີ;
3. ມີສິ່ງອຳນວຍຄວາມສະດວກ, ມີທຶນ, ມີພາຫະນະ, ເຄື່ອງມື, ສະຖານທີ່ ແລະ ອື່ນໆ ທີ່ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການບໍລິການການຖ່າຍທອດເຕັກໂນໂລຊີ.

ສໍາລັບທຸລະກິດບໍລິການ ກວດສອບ, ຕີລາຄາ ແລະ ປະເມີນ ເຕັກໂນໂລຊີ ຕ້ອງມີຜູ້ກວດສອບ, ຕີລາຄາ ແລະ ປະເມີນເຕັກໂນໂລຊີ ທີ່ມີຄວາມຮູ້ສະເພາະດ້ານແຕ່ຊັ້ນສູງຂຶ້ນໄປ ແລະ ມີໃບຢັ້ງຢືນຜ່ານການຝຶກອົບຮົມວຽກງານດັ່ງກ່າວ.

**ມາດຕາ 23 ການຢັ້ງຢືນກ່ຽວກັບການກວດສອບ, ຕີລາຄາ ແລະ ປະເມີນເຕັກໂນໂລຊີ**

ຜູ້ດໍາເນີນທຸລະກິດການບໍລິການການຖ່າຍທອດເຕັກໂນໂລຊີ ຕ້ອງຢັ້ງຢືນຜົນຂອງການກວດສອບ, ຕີລາຄາ ແລະ ປະເມີນເຕັກໂນໂລຊີຂອງຕົນ ຢ່າງເປັນລາຍລັກອັກສອນໃຫ້ແກ່ຜູ້ຮ້ອງຂໍ ແລະ ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ.

## ພາກທີ V
## ສິດ ແລະ ພັນທະ ຂອງຜູ້ດໍາເນີນການຖ່າຍທອດເຕັກໂນໂລຊີ

**ມາດຕາ 24 ສິດ ແລະ ພັນທະ ຂອງຜູ້ເປັນເຈົ້າຂອງເຕັກໂນໂລຊີ**

ເຈົ້າຂອງເຕັກໂນໂລຊີ ແມ່ນ ຜູ້ທີ່ປະດິດສ້າງເຕັກໂນໂລຊີນັ້ນໂດຍກົງ ຫຼື ຜູ້ໄດ້ຮັບສິດຈາກຜູ້ປະດິດສ້າງ ຊຶ່ງມີ ສິດ ແລະ ພັນທະ ດັ່ງນີ້:

1. ຖ່າຍທອດສິດ ທັງໝົດ ຫຼື ບາງສ່ວນ ຂອງເຕັກໂນໂລຊີນັ້ນ ໃຫ້ຜູ້ຮັບການຖ່າຍທອດດ້ວຍການຂາຍ, ແລກປ່ຽນ, ໃຫ້ເຊົ່າ, ມອບໃຫ້ ຫຼື ສືບທອດ;
2. ຖ່າຍທອດສິດນໍາໃຊ້ເຕັກໂນໂລຊີ ໃນກໍລະນີ ທີ່ເຕັກໂນໂລຊີດັ່ງກ່າວ ໄດ້ໝົດອາຍຸການປົກປ້ອງ ຫຼື ບໍ່ໄດ້ຮັບການປົກປ້ອງສິດທາງດ້ານຊັບສິນທາງປັນຍາ ຢູ່ ສປປ ລາວ;
3. ປະຕິບັດຕາມສັນຍາການຖ່າຍທອດເຕັກໂນໂລຊີຢ່າງເຂັ້ມງວດ;
4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ທີ່ຖືກຕ້ອງຕາມກົດໝາຍ;
5. ຕິດຕາມ, ກວດກາ ແລະ ປະເມີນ ການນໍາໃຊ້ເຕັກໂນໂລຊີ ທີ່ໄດ້ມີການຖ່າຍທອດ;
6. ຊຸກຍູ້ ແລະ ສົ່ງເສີມ ໃຫ້ສັງຄົມໄດ້ນໍາໃຊ້ເຕັກໂນໂລຊີຂອງຕົນ;
7. ໃຫ້ການຮ່ວມມື ໃນການສະໜອງຂໍ້ມູນ ຂ່າວສານ ກ່ຽວກັບຄຸນປະໂຫຍດຂອງເຕັກໂນໂລຊີ;
8. ປົກປັກຮັກສາສິ່ງແວດລ້ອມ;
9. ຮັບຜິດຊອບຜົນເສຍຫາຍທີ່ເກີດຂຶ້ນຈາກການນໍາໃຊ້ເຕັກໂນໂລຊີ ໃນກໍລະນີທີ່ເຕັກໂນໂລຊີ ບໍ່ໄດ້ຕາມມາດຕະຖານທີ່ໄດ້ກໍານົດໄວ້;
10. ປະຕິບັດພັນທະດ້ານການເງິນໃຫ້ລັດ ທີ່ໄດ້ມາຈາກການນໍາໃຊ້ເຕັກໂນໂລຊີ ເພື່ອສະແຫວງຫາຜົນປະໂຫຍດທາງການຄ້າ;
11. ຈັດຝຶກອົບຮົມໃຫ້ແກ່ຜູ້ຮັບການຖ່າຍທອດເຕັກໂນໂລຊີ ແລະ ບຸກຄົນອື່ນ;
12. ເຂົ້າຮ່ວມກິດຈະກໍາ ກ່ຽວກັບການຖ່າຍທອດເຕັກໂນໂລຊີທີ່ພາກລັດ ຫຼື ພາກສ່ວນອື່ນຈັດຂຶ້ນ;
13. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 25 ສິດ ແລະ ພັນທະ ຂອງຜູ້ຖ່າຍທອດເຕັກໂນໂລຊີ**

ຜູ້ຖ່າຍທອດເຕັກໂນໂລຊີ ແມ່ນ ຜູ້ທີ່ເປັນເຈົ້າຂອງ ຫຼື ຜູ້ທີ່ໄດ້ຮັບສິດຖ່າຍທອດຈາກຜູ້ເປັນເຈົ້າຂອງເຕັກໂນໂລຊີ ຊຶ່ງມີ ສິດ ແລະ ພັນທະ ດັ່ງນີ້:

1. ສະເໜີໃຫ້ຜູ້ຮັບການຖ່າຍທອດເຕັກໂນໂລຊີ ປະຕິບັດຕາມເນື້ອໃນທີ່ຕົກລົງກັນໃນສັນຍາ;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ທີ່ຖືກຕ້ອງຕາມກົດໝາຍ;

3. ໄດ້ຮັບຄ່າຖ່າຍທອດເຕັກໂນໂລຊີຢ່າງຄົບຖ້ວນ ລວມທັງຜົນປະໂຫຍດອື່ນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ;

4. ໄດ້ຮັບການຟື້ນຟູ, ທົດແທນຄ່າເສຍຫາຍ ຈາກຜູ້ຮັບການຖ່າຍທອດເຕັກໂນໂລຊີ ໃນກໍລະນີ ບໍ່ປະຕິບັດຕາມສິດ ແລະ ພັນທະ ທີ່ກໍານົດໄວ້ໃນສັນຍາ;

5. ສະເໜີ, ຮ້ອງຟ້ອງ, ຂໍຄວາມເປັນທໍາ ໃນກໍລະນີ ມີການລະເມີດສັນຍາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

6. ຖ່າຍທອດເຕັກໂນໂລຊີ ໃຫ້ຖືກຕ້ອງຕາມກົດໝາຍ, ຮັບປະກັນບໍ່ໃຫ້ລະເມີດສິດຂອງບຸກຄົນອື່ນ ແລະ ໃຊ້ແທນຄ່າເສຍຫາຍ ໃນກໍລະນີທີ່ຕົນໄດ້ກໍ່ຂຶ້ນ;

7. ປົກປັກຮັກສາສິ່ງແວດລ້ອມ;

8. ຈັດຝຶກອົບຮົມໃຫ້ແກ່ຜູ້ຮັບການຖ່າຍທອດເຕັກໂນໂລຊີ ແລະ ບຸກຄົນອື່ນ;

9. ຮັກສາຂໍ້ມູນຄວາມລັບຂອງເຕັກໂນໂລຊີ ທີ່ຢູ່ໃນຂະບວນການເຈລະຈາ, ການເຊັນສັນຍາຖ່າຍທອດເຕັກໂນໂລຊີ ຕາມຄວາມຕ້ອງການຂອງຄູ່ຮ່ວມເຈລະຈາ;

10. ແຈ້ງໃຫ້ຜູ້ຮັບການຖ່າຍທອດເຕັກໂນໂລຊີ ໃນກໍລະນີພົບບັນຫາທາງດ້ານເຕັກນິກ ພ້ອມທັງແນະນໍາວິທີແກ້ໄຂທີ່ເໝາະສົມ;

11. ຂໍອະນຸຍາດຖ່າຍທອດເຕັກໂນໂລຊີ ທີ່ຢູ່ໃນບັນຊີເຕັກໂນໂລຊີທີ່ຄວບຄຸມການຖ່າຍທອດ;

12. ເຂົ້າຮ່ວມກິດຈະກໍາ ກ່ຽວກັບການຖ່າຍທອດເຕັກໂນໂລຊີທີ່ພາກລັດ ຫຼື ພາກສ່ວນອື່ນຈັດຂຶ້ນ;

13. ປະຕິບັດພັນທະດ້ານການເງິນໃຫ້ລັດ ທີ່ໄດ້ມາຈາກການຖ່າຍທອດເຕັກໂນໂລຊີ;

14. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 26 ສິດ ແລະ ພັນທະຂອງຜູ້ຮັບການຖ່າຍທອດເຕັກໂນໂລຊີ**

ຜູ້ຮັບການຖ່າຍທອດເຕັກໂນໂລຊີ ແມ່ນ ຜູ້ທີ່ໄດ້ຮັບສິດການເປັນເຈົ້າຂອງ ແລະ ສິດນໍາໃຊ້ຈາກຜູ້ຖ່າຍທອດເຕັກໂນໂລຊີ ຊຶ່ງມີ ສິດ ແລະ ພັນທະ ດັ່ງນີ້:

1. ສະເໜີໃຫ້ຜູ້ຖ່າຍທອດເຕັກໂນໂລຊີ ປະຕິບັດຕາມເນື້ອໃນ ທີ່ໄດ້ຕົກລົງກັນໄວ້ໃນສັນຍາ;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນທີ່ຖືກຕ້ອງຕາມກົດໝາຍ;

3. ວ່າຈ້າງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມາຈັດຕັ້ງປະຕິບັດການຮັບການຖ່າຍທອດເຕັກໂນໂລຊີແທນຕົນ;

4. ໄດ້ຮັບການຝຶກອົບຮົມຈາກເຈົ້າຂອງ ຫຼື ຜູ້ຖ່າຍທອດເຕັກໂນໂລຊີ;

5. ປົກປັກຮັກສາສິ່ງແວດລ້ອມ;

6. ໄດ້ຮັບການຟື້ນຟູ, ທົດແທນຄ່າເສຍຫາຍ ຈາກຜູ້ຖ່າຍທອດເຕັກໂນໂລຊີ ໃນກໍລະນີ ບໍ່ປະຕິບັດຕາມສິດ ແລະ ພັນທະ ທີ່ໄດ້ກໍານົດໄວ້ໃນສັນຍາ;

7. ສະເໜີ, ຮ້ອງຟ້ອງ, ຂໍຄວາມເປັນທໍາ ໃນກໍລະນີມີການລະເມີດສັນຍາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

8. ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ;

9. ຮັກສາຂໍ້ມູນຄວາມລັບຂອງເຕັກໂນໂລຊີ ທີ່ຢູ່ໃນຂະບວນການເຈລະຈາ, ການເຊັນສັນຍາການຖ່າຍທອດເຕັກໂນໂລຊີ ຕາມຄວາມຕ້ອງການຂອງຄູ່ຮ່ວມເຈລະຈາ;

10. ຂໍອະນຸຍາດຖ່າຍທອດເຕັກໂນໂລຊີທີ່ຢູ່ໃນບັນຊີເຕັກໂນໂລຊີທີ່ຄວບຄຸມການຖ່າຍທອດ ໃນກໍລະນີນໍາເຂົ້າຈາກຕ່າງປະເທດ;

11. ປະກອບສ່ວນເຂົ້າໃນກິດຈະກໍາຂອງພາກລັດຈັດຂຶ້ນກ່ຽວກັບການຖ່າຍທອດເຕັກໂນໂລຊີ;

12. ເຂົ້າຮ່ວມກິດຈະກໍາ ກ່ຽວກັບການຖ່າຍທອດເຕັກໂນໂລຊີທີ່ພາກລັດ ຫຼື ພາກສ່ວນອື່ນຈັດຂຶ້ນ;

13. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 27 ສິດ ແລະ ພັນທະຂອງຜູ້ດໍາເນີນທຸລະກິດບໍລິການ ການຖ່າຍທອດເຕັກໂນໂລຊີ**

ຜູ້ດໍາເນີນທຸລະກິດບໍລິການ ການຖ່າຍທອດເຕັກໂນໂລຊີ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດໍາເນີນການບໍລິການ ການຖ່າຍທອດເຕັກໂນໂລຊີ ຕາມທີ່ໄດ້ຮັບອະນຸຍາດ;
2. ສະເໜີໃຫ້ຜູ້ໃຊ້ບໍລິການສະໜອງຂໍ້ມູນ ຂ່າວສານ ແລະ ເອກະສານທີ່ຈໍາເປັນໃຫ້ແກ່ຕົນ;
3. ວ່າຈ້າງນັກວິຊາການ ພາຍໃນ ແລະ ຕ່າງປະເທດ ເພື່ອດໍາເນີນການບໍລິການ ການຖ່າຍທອດເຕັກໂນໂລຊີແທນຕົນ;
4. ໄດ້ຮັບຄ່າບໍລິການ ແລະ ຜົນປະໂຫຍດອື່ນ ຈາກການດໍາເນີນການໃຫ້ບໍລິການຕາມສັນຍາ;
5. ສະເໜີໃຫ້ຜູ້ໃຊ້ບໍລິການ ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ ຈາກການລະເມີດຂອງຜູ້ກ່ຽວ;
6. ປະຕິບັດຕາມສັນຍາການບໍລິການຖ່າຍທອດເຕັກໂນໂລຊີ;
7. ຮັບຜິດຊອບຕໍ່ຜູ້ໃຊ້ບໍລິການ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ເກີດຈາກການບໍລິການຂອງຕົນ;
8. ຮັກສາຂໍ້ມູນຄວາມລັບ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ;
9. ເຂົ້າຮ່ວມກິດຈະກໍາກ່ຽວກັບການຖ່າຍທອດເຕັກໂນໂລຊີທີ່ພາກລັດ ຫຼື ພາກສ່ວນອື່ນຈັດຂຶ້ນ;
10. ປະຕິບັດພັນທະດ້ານການເງິນໃຫ້ລັດ ທີ່ໄດ້ມາຈາກການດໍາເນີນການບໍລິການການຖ່າຍທອດເຕັກໂນໂລຊີ;
11. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ VI
## ການສົ່ງເສີມການຖ່າຍທອດເຕັກໂນໂລຊີ

**ມາດຕາ 28 ການສົ່ງເສີມການຖ່າຍທອດເຕັກໂນໂລຊີ**

ການສົ່ງເສີມການຖ່າຍທອດເຕັກໂນໂລຊີ ມີ ດັ່ງນີ້:

1. ການສົ່ງເສີມດ້ານນະໂຍບາຍການຖ່າຍທອດເຕັກໂນໂລຊີ;
2. ການສົ່ງເສີມດ້ານການພັດທະນາຊັບພະຍາກອນມະນຸດ;
3. ການສົ່ງເສີມດ້ານການຕະຫຼາດເຕັກໂນໂລຊີ.

**ມາດຕາ 29 ການສົ່ງເສີມດ້ານນະໂຍບາຍການຖ່າຍທອດເຕັກໂນໂລຊີ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນການຖ່າຍທອດເຕັກໂນໂລຊີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້ ຈະໄດ້ຮັບນະໂຍບາຍສົ່ງເສີມການຄົ້ນຄວ້າ, ການພັດທະນາເຕັກໂນໂລຊີ ແລະ ນະວັດຕະກໍາ, ການປະດິດສ້າງ, ການນໍາໃຊ້ ແລະ ການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 30 ການສົ່ງເສີມດ້ານການພັດທະນາຊັບພະຍາກອນມະນຸດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການຖ່າຍທອດເຕັກໂນໂລຊີ ຕ້ອງມີແຜນການສ້າງ ແລະ ນຳໃຊ້ບຸກຄະລາກອນ, ການຈັດແບ່ງງົບປະມານໃນການສ້າງພື້ນຖານອຳນວຍຄວາມສະດວກ, ສະຖານທີ່ຝຶກອົບຮົມຍົກລະດັບໃຫ້ແກ່ບຸກຄະລາກອນ ແລະ ໃຫ້ທຶນການສຶກສາໃນການສ້າງ, ບຳລຸງ, ຍົກລະດັບດ້ານວິຊາສະເພາະ, ເຕັກນິກວິຊາການໃຫ້ແກ່ບຸກຄະລາກອນ ດ້ານການຄຸ້ມຄອງ, ການຖ່າຍທອດເຕັກໂນໂລຊີ ແລະ ຜູ້ຮັບການຖ່າຍທອດເຕັກໂນໂລຊີ.

**ມາດຕາ 31 ການສົ່ງເສີມດ້ານການຕະຫຼາດເຕັກໂນໂລຊີ**

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຂົ້າຮ່ວມການພັດທະນາຕະຫຼາດເຕັກໂນໂລຊີ ດ້ວຍຮູບການ ດັ່ງນີ້:

1. ລົງທຶນກໍ່ສ້າງໂຄງລ່າງພື້ນຖານໃຫ້ແກ່ຕະຫຼາດເຕັກໂນໂລຊີ, ການວາງສະແດງເຕັກໂນໂລຊີ, ສູນແລກປ່ຽນເຕັກໂນໂລຊີ, ສູນບົ່ມເພາະເຕັກໂນໂລຊີ ແລະ ດ້ວຍຮູບການອື່ນ;
2. ຊຸກຍູ້, ສະໜັບສະໜູນ ການເຄື່ອນໄຫວຂອງຜູ້ປະກອບກິດຈະການໃໝ່ ແລະ ການຈັບຄູ່ຮ່ວມມືດ້ານເຕັກໂນໂລຊີ;
3. ປະກາດ, ເຜີຍແຜ່, ນຳສະເໜີເຕັກໂນໂລຊີ ແລະ ເຂົ້າຮ່ວມງານວາງສະແດງຕະຫຼາດເຕັກໂນໂລຊີທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 32 ກອງທຶນສົ່ງເສີມການຖ່າຍທອດ ແລະ ພັດທະນາເຕັກໂນໂລຊີ**

ກອງທຶນສົ່ງເສີມການຖ່າຍທອດ ແລະ ພັດທະນາເຕັກໂນໂລຊີ ໃຫ້ນຳໃຊ້ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອສົ່ງເສີມການຄົ້ນຄວ້າ, ການປະດິດສ້າງ, ການດັດປັບເຕັກໂນໂລຊີ, ການຕໍ່ຍອດຜົນຂອງການຄົ້ນຄວ້າເຂົ້າໃນການຜະລິດ, ການບໍລິການ, ການຄ້າ ແລະ ການຖ່າຍທອດເຕັກໂນໂລຊີ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 33 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ການຖ່າຍທອດເຕັກໂນໂລຊີ ເພື່ອສ້າງຜົນເສຍຫາຍໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
2. ດຳເນີນການຖ່າຍທອດເຕັກໂນໂລຊີ ທີ່ຢູ່ໃນບັນຊີເຕັກໂນໂລຊີທີ່ຫ້າມຖ່າຍທອດ, ເຕັກໂນໂລຊີທີ່ຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສ້າງອຸປະສັກ ຂັດຂວາງການສົ່ງເສີມ ແລະ ການພັດທະນາການຖ່າຍທອດເຕັກໂນໂລຊີ ໃນທຸກຮູບການ;
4. ແອບອ້າງເອົາສິດເປັນເຈົ້າຂອງເຕັກໂນໂລຊີຂອງຜູ້ອື່ນ ມາເປັນຂອງຕົນ;
5. ດັດແປງເຕັກນິກ ໂດຍບໍ່ໄດ້ຮັບອະນຸຍາດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 34 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນທີ່ກ່ຽວຂ້ອງກັບການຖ່າຍທອດເຕັກໂນໂລຊີ**

ຫ້າມພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງກັບການຖ່າຍທອດເຕັກໂນໂລຊີ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ບັງຄັບ, ນາບຂູ່ຜູ້ອື່ນ ເພື່ອຫາຜົນປະໂຫຍດແກ່ຕົນ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ຂໍເອົາ, ທວງເອົາ, ຮັບເອົາສິນບົນ ຫຼື ຜົນປະໂຫຍດອື່ນ ຈາກຜູ້ດຳເນີນການຖ່າຍທອດເຕັກໂນໂລຊີ;
3. ເປີດເຜີຍຄວາມລັບຂອງເຕັກໂນໂລຊີ ແລະ ຂັດຂວາງການດຳເນີນການຖ່າຍທອດເຕັກໂນໂລຊີ;
4. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາ ໃນການພິຈາລະນາເອກະສານຕ່າງໆ ໂດຍບໍ່ມີເຫດຜົນ;
5. ລາຍງານຂໍ້ມູນທີ່ບໍ່ຖືກຕ້ອງ, ຄົບຖ້ວນ ກ່ຽວກັບການຖ່າຍທອດເຕັກໂນໂລຊີ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 35 ຂໍ້ຫ້າມສຳລັບຜູ້ດຳເນີນການຖ່າຍທອດເຕັກໂນໂລຊີ**

ຫ້າມຜູ້ດຳເນີນການຖ່າຍທອດເຕັກໂນໂລຊີ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການຖ່າຍທອດເຕັກໂນໂລຊີ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມການອະນຸຍາດ;
2. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນ ທີ່ບໍ່ຖືກຕ້ອງແກ່ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບການຖ່າຍທອດເຕັກໂນໂລຊີ;
3. ປອມແປງເອກະສານ, ນຳໃຊ້ເອກະສານປອມ ກ່ຽວກັບການຖ່າຍທອດເຕັກໂນໂລຊີ;
4. ປະຕິເສດການສະໜອງຂໍ້ມູນ ກ່ຽວກັບການຖ່າຍທອດເຕັກໂນໂລຊີ ຕໍ່ອົງການຄຸ້ມຄອງການຖ່າຍທອດເຕັກໂນໂລຊີ ແລະ ອົງການອື່ນທີ່ກ່ຽວຂ້ອງ;
5. ໂຄສະນາ, ເຜີຍແຜ່ເຕັກໂນໂລຊີ ເກີນຄວາມເປັນຈິງ;
6. ຕົວະຍົວະ, ຫຼອກລວງໃຫ້ເຮັດ ຫຼື ປອມແປງ ສັນຍາຖ່າຍທອດເຕັກໂນໂລຊີ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 36 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການຖ່າຍທອດເຕັກໂນໂລຊີ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

ມາດຕາ 37 ການແກ້ໄຂດ້ວຍການປະນີປະນອມ

ໃນກໍລະນີເກີດຂໍ້ຂັດແຍ່ງ ກ່ຽວກັບການຖ່າຍທອດເຕັກໂນໂລຊີ ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະຈາ ແລະ ປະນີປະນອມກັນ ເພື່ອຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ມາດຕາ 38 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດຂໍ້ຂັດແຍ່ງ ກ່ຽວກັບການຖ່າຍທອດເຕັກໂນໂລຊີນັ້ນ ຄູ່ກໍລະນີມີສິດສະເໜີຕໍ່ອົງການຄຸ້ມຄອງການຖ່າຍທອດເຕັກໂນໂລຊີ ເພື່ອພິຈາລະນາແກ້ໄຂ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 39 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດຂໍ້ຂັດແຍ່ງ ກ່ຽວກັບທຸລະກິດ ການຖ່າຍທອດເຕັກໂນໂລຊີ ຄູ່ກໍລະນີມີສິດ ສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

ມາດຕາ 40 ການຕັດສິນຂອງສານ

ໃນກໍລະນີ ເກີດຂໍ້ຂັດແຍ່ງ ກ່ຽວກັບການຖ່າຍທອດເຕັກໂນໂລຊີ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕາມກົດໝາຍ.

ມາດຕາ 41 ການແກ້ໄຂທີ່ມີລັກສະນະສາກົນ

ໃນກໍລະນີເກີດຂໍ້ຂັດແຍ່ງ ທີ່ມີລັກສະນະສາກົນກ່ຽວກັບການຖ່າຍທອດເຕັກໂນໂລຊີ ຄູ່ກໍລະນີສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ ຫຼື ຕ່າງປະເທດ ຕາມການຕົກລົງກັນ ຫຼື ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ

ມາດຕາ 42 ອົງການຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ ປະກອບດ້ວຍ:

1. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
2. ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ;
3. ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**

ໃນການຄຸ້ມຄອງຖ່າຍທອດເຕັກໂນໂລຊີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍກ່ຽວກັບການຖ່າຍທອດເຕັກໂນໂລຊີ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ເປັນລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ແລ້ວຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບການຖ່າຍທອດເຕັກໂນໂລຊີ ໃນຂອບເຂດທົ່ວປະເທດ;

4. ສ້າງ ແລະ ຍົກລະດັບບຸກຄະລາກອນກ່ຽວກັບການຖ່າຍທອດເຕັກໂນໂລຊີ;

5. ຕີລາຄາ, ປະເມີນຄວາມຕ້ອງການເຕັກໂນໂລຊີຂອງຂະແໜງການ ເພື່ອຕອບສະໜອງການພັດທະນາເສດຖະກິດ-ສັງຄົມ ແລະ ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນໃນແຕ່ລະໄລຍະ;

6. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ການຖ່າຍທອດເຕັກໂນໂລຊີ ໃນຂອບເຂດທົ່ວປະເທດ;

7. ກວດສອບ, ຕີລາຄາ, ປະເມີນເຕັກໂນໂລຊີ ແລະ ໃຫ້ບໍລິການການຖ່າຍທອດເຕັກໂນໂລຊີ;

8. ຄົ້ນຄວ້າ ກຳນົດບັນຊີເຕັກໂນໂລຊີທີ່ ສົ່ງເສີມ, ຄວບຄຸມ ແລະ ຫ້າມຖ່າຍທອດ ເພື່ອສະເໜີລັດຖະບານ ພິຈາລະນາ;

9. ແຈ້ງເຕືອນ ກ່ຽວກັບການນຳໃຊ້ເຕັກໂນໂລຊີທີ່ສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງທີ່ມີຊີວິດ ໃຫ້ສັງຄົມຮັບຊາບ;

10. ອອກ ຫຼື ຖອນໃບອະນຸຍາດ ການຖ່າຍທອດເຕັກໂນໂລຊີ;

11. ຕິດຕາມການປະຕິບັດສັນຍາຖ່າຍທອດເຕັກໂນໂລຊີ;

12. ຄົ້ນຄວ້າ, ວິໄຈ, ຊອກຫາວິທີການປ້ອງກັນ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນກັບການນຳໃຊ້, ການຍົກເລີກ ແລະ ການຖ່າຍທອດເຕັກໂນໂລຊີ ໃນຂອບເຂດທົ່ວປະເທດ;

13. ກວດກາ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການລະເມີດກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ;

14. ເກັບກຳ, ວິໄຈ, ສັງລວມຂໍ້ມູນ ແລະ ສະຖິຕິກ່ຽວກັບການຖ່າຍທອດເຕັກໂນໂລຊີ;

15. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການຖ່າຍທອດເຕັກໂນໂລຊີ;

16. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບການຖ່າຍທອດເຕັກໂນໂລຊີ;

17. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຖ່າຍທອດເຕັກໂນໂລຊີ ໃຫ້ລັດຖະບານຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ແຜນການ ກ່ຽວກັບການຖ່າຍທອດເຕັກໂນໂລຊີ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ;

2. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການຖ່າຍທອດເຕັກໂນໂລຊີ;

3. ຊີ້ນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດການຖ່າຍທອດເຕັກໂນໂລຊີ;

4. ຕີລາຄາ, ປະເມີນຄວາມຕ້ອງການເຕັກໂນໂລຊີຂອງພະແນກການ ເພື່ອຕອບສະໜອງການພັດທະນາເສດຖະກິດ-ສັງຄົມຂອງ ແຂວງ, ນະຄອນຫຼວງ ໃນແຕ່ລະໄລຍະ;

5. ອອກ ຫຼື ຖອນໃບອະນຸຍາດ ການຖ່າຍທອດເຕັກໂນໂລຊີ;

6. ຕິດຕາມການປະຕິບັດສັນຍາຖ່າຍທອດເຕັກໂນໂລຊີ;

7. ເກັບກຳ, ວິໄຈ, ສັງລວມຂໍ້ມູນ ແລະ ສະຖິຕິກ່ຽວກັບການຖ່າຍທອດເຕັກໂນໂລຊີ;

8. ພິຈາລະນາ ແລະ ແກ້ໄຂຄຳສະເໜີກ່ຽວກັບ ການຖ່າຍທອດເຕັກໂນໂລຊີ;

9. ຄົ້ນຄວ້າ, ວິໄຈ, ຊອກຫາວິທີການປ້ອງກັນ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນກັບການຖ່າຍທອດເຕັກໂນໂລຊີ;

10. ປະສານສົມທົບກັບພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການຖ່າຍທອດເຕັກໂນໂລຊີ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຖ່າຍທອດເຕັກໂນໂລຊີ ຕາມການມອບໝາຍຂອງຂັ້ນເທິງ;

12. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຖ່າຍທອດເຕັກໂນໂລຊີ ຕໍ່ກະຊວງວິທະຍາສາດ ແລະເຕັກໂນໂລຊີ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການຖ່າຍທອດເຕັກໂນໂລຊີ;

2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການຖ່າຍທອດເຕັກໂນໂລຊີ;

3. ຕິດຕາມ ການປະຕິບັດສັນຍາຖ່າຍທອດເຕັກໂນໂລຊີ;

4. ເກັບກຳ, ສັງລວມຂໍ້ມູນ ແລະ ສະຖິຕິກ່ຽວກັບວຽກງານຖ່າຍທອດເຕັກໂນໂລຊີ;

5. ປະສານສົມທົບກັບຫ້ອງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຖ່າຍທອດເຕັກໂນໂລຊີ;

6. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຖ່າຍທອດເຕັກໂນໂລຊີ ຕໍ່ພະແນກວິທະຍາສາດ ແລະເຕັກໂນໂລຊີແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 46 ສິດ ແລະ ໜ້າທີ່ຂອງຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການອຸດສາຫະກຳ ແລະ ການຄ້າ, ແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ໃຫ້ການຮ່ວມມືກັບຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາ

**ມາດຕາ 47 ອົງການກວດກາ**

ອົງການກວດກາວຽກງານຖ່າຍທອດເຕັກໂນໂລຊີ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

**ມາດຕາ 48 ເນື້ອໃນການກວດກາ**

ການກວດກາວຽກງານຖ່າຍທອດເຕັກໂນໂລຊີ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ;

2. ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານຖ່າຍທອດເຕັກໂນໂລຊີ;

3. ການເຄື່ອນໄຫວວຽກງານຂອງພະນັກງານ-ລັດຖະກອນ ແລະ ອົງການຄຸ້ມຄອງວຽກງານຖ່າຍທອດເຕັກໂນໂລຊີ;

4. ການປະຕິບັດການຖ່າຍທອດເຕັກໂນໂລຊີ.

**ມາດຕາ 49 ຮູບການການກວດກາ**

ການກວດກາວຽກງານຖ່າຍທອດເຕັກໂນໂລຊີ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປົກກະຕິ, ມີກຳນົດເວລາອັນແນ່ນອນ ແລະ ຕ້ອງປະຕິບັດຢ່າງໜ້ອຍ ສອງຄັ້ງ ຕໍ່ປີ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ແລະ ຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາແຕ່ລະຄັ້ງນັ້ນ ໃຫ້ກວດກາທັງເອກະສານ ພ້ອມທັງລົງກວດກາຢູ່ສະຖານທີ່ຕົວຈິງ ແລະ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

ສໍາລັບການກວດສອບ, ຕີລາຄາ, ປະເມີນເຕັກໂນໂລຊີ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 50 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງປະຕິບັດວຽກງານການຄົ້ນຄວ້າ ແລະ ການພັດທະນາ, ການປະດິດສ້າງ ແລະ ການຖ່າຍທອດເຕັກໂນໂລຊີ ຈະໄດ້ຮັບການຍ້ອງຍໍ, ການປະກາດກຽດຕິຄຸນ, ການໃຫ້ບໍາເນັດລາງວັນ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 51 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

### ມາດຕາ 52 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທໍາອິດ ຊຶ່ງບໍ່ແມ່ນການກະທໍາຜິດທາງອາຍາ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

### ມາດຕາ 53 ມາດຕະການທາງວິໄນ

ພະນັກງານ-ລັດຖະກອນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ໄດ້ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ, ບໍ່ມີຄວາມຈິງໃຈລາຍງານ ແລະ ຫຼົບຫຼີກຈາກການລະເມີດຂອງຕົນຈະຖືກລົງວິໄນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 54 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຖືກກ່າວເຕືອນ ແລະ ສຶກສາອົບຮົມແລ້ວ ແຕ່ຫາກບໍ່ເຂັດຫຼາບ ແລະ ໄດ້ກໍ່ຄວາມເສຍຫາຍ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກປັບໃໝຕາມທີ່ໄດ້ກໍານົດໄວ້ໃນລະບຽບການ.

### ມາດຕາ 55 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ເນື່ອງມາຈາກການລະເມີດສັນຍາຖ່າຍທອດ, ບໍລິການ ຫຼື ການລະເມີດອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 56 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 57 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 58 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້